ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເລກທີ: …0098../ສວນ

ນະຄອນຫຼວງວຽງຈັນ, ວັນທີ: 15 / 01 / 2019

ຮຽນ: ຜູ້ຖືຮຸ້ນທີ່ນັບຖື.

ເລື່ອງ: ການໂອນພະແນກ ລິບ ແລະ ຂັ້ນໄດເລື່ອນ ໃຫ້ ບໍລິສັດ ມິດຊຸບິຊິ ເອເລເວດເຕີ (ປະເທດໄທ) ຈຳກັດ.

- ອີງຕາມມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປະຈຳປີ 2017 ລົງ ວັນທີ 6/04/2018.
- ອີງຕາມ ວາລະທີ 9. ພິຈາລະນາຍົກເລີກການຈຳໜ່າຍໝວດສິນຄ້າ ລິບ ແລະ ຂັ້ນໄດເລື່ອນ.

ເພື່ອເປັນການປະຕິບັດຕາມມະຕິຂອງກອງປະຊຸມຜູ້ຖືຮຸ້ນ.

ໃນຕອນບ່າຍ ວັນທີ 14 ມັງກອນ 2019, ເວລາ 14:00 ໂມງ ທີ່ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຈັດພິທີ ລົງນາມ ບົດບັນທຶກ ຂໍ້ຕົກລົງ ໂອນ ພະແນກ ລິບ ແລະ ຂັ້ນໄດ້ເລື່ອນ ຍີ່ຫໍ້ມິດຊຸບິຊິ ລະຫວ່າງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຊິ່ງລົງນາມໂດຍ ທ່ານ ວັດດານາ ສຸຄະບັນດິດ ຜູ້ອຳນວຍການໃຫຍ່ ແລະ ບໍລິສັດ ມິດຊຸບິຊິ ເອເລເວດເຕີ (ປະເທດໄທ) ຈຳກັດ ເຊິ່ງລົງນາມ ໂດຍທ່ານ Munehisa Okamoto ຜູ້ອຳນວຍການໃຫຍ່ ເພື່ອເປັນການຍົກເລີກຈຳໜ່າຍໝວດສິນຄ້າດັ່ງກ່າວໃຫ້ສອດຄ່ອງກັບມະຕິຂອງກອງປະຊຸມຜູ້ຖືຮຸ້ນ.

